# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 1 ເມສາ 2018 (4-1-2018)

# ພຣະເຈົ້າຊົງສັດຊື່

**ບົດຈົບທີ່ຕື່ນເຕັ້ນອັນໃດໄດ້ເຮັດໃຫ້ທ່ານສງົບສົນເທຈົນອຸທານອອກມາວ່າ"ມັນເປັນໄປໄດ້ຢ່າງໃດ?"**

**ຈຸດສໍາຄັນໃນບົດຮຽນ:** ອຸບໂມງທີ່ວ່າງເປົ່າຊີ້ໃຫ້ເຫັນເຖິງຄວາມສັດຊື່ຂອງພຣະເຈົ້າ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ພວກທີ່ສົງສັຍສ່ວນຫຼາຍຈະມີຄໍາຖາມເຖິງການຄືນມາຈາກຄວາມຕາຍຂອງພຣະຄຣິດ. ແຕ່ວ່າພວກທີ່ຕັ້ງເປົ້າໝາຍເບິ່ງໃນເຣື່ອງນີ້ຈະມີບົດສລຸບທີ່ແຕກຕ່າງ.

- "ຂ້າພະເຈົ້າບໍ່ຮູ້ຈັກປວັດສາດຂອງຄົນໃດໃນມວນມະນຸດຊາດທີ່ມີຫຼັກຖານທີ່ດີກ່ວາແລະພິສູດໄດ້ໃນທຸກໆແງ່ມຸມ, ເພື່ອຕອບຄໍາຖາມທີ່ກ່ຽວຂ້ອງໃຫ້ມີການເຂົ້າໃຈ, ກ່ວາເຄື່ອງໝາຍສໍາຄັນຍິ່ງໃຫຍ່ທີ່ພຣະເຈົ້າໄດ້ຊົງປະທານແກ່ພວກເຮົາທີ່ໃຫ້ພຣະຄຣິດໄດ້ສິ້ນພຣະຊົນແລະໄດ້ຟື້ນຄືນມາອີກຈາກຄວາມຕາຍ." -ທ່ານໂທມັສ ອາໂນຣ, ມະຫາວິທະຍາໄລ ອ໊ອກຝອດ.1
- ອາຈານສອນໃນໂຮງຮຽນກົດໝາຍ ຮາເວີດ, ດຣ. ຊາຍມອນ ກຣີນລີຟ, ໄດ້ຫົວເຍາະເຍີ້ຍຄຣິສຕຽນໃນຫ້ອງຂອງລາວຈົນກ່ວາມີບາງຄົນໄດ້ທ້າທາຍລາວແລະພິສູດຫຼັກຖານສໍາລັບການຄືນພຣະຊົນຂອງພຣະເຢຊູໂດຍຜ່ານການໄຕ່ຕອງຂອງກົດໝາຍ. ລາວໄດ້ຮັບເອົາຄໍາທ້າທາຍນັ້ນແລະໄດ້ພົບຫຼັກຖານທີ່ໜ້າໃສ່ໃຈແລະລາວໄດ້ສລຸບວ່າການຄືນພຣະຊົນຂອງພຣະເຢຊູໄດ້ເປັນສິ່ງສໍາຄັນລະດັບນຶ່ງທີ່ມີຫຼັກຖານຂອງປວັດສາດ.2

**ຫຼັກຖານທີ່ຊີ້ໃຫ້ເຫັນເຖິງການຄືນພຣະຊົນຂອງພຣະເຢຊູເປັນສິ່ງທີ່ສາມາດພິສູດໄດ້ໃນປວັດສາດ ຫຼັກຖານອັນນີ້ຍັງໄດ້ບົ່ງບອກບາງຢ່າງແກ່ພວກເຮົາກ່ຽວກັບພຣະເຈົ້າ, ຜູ້ຊົງບັນດົນໃຫ້ພຣະເຢຊູຄືນມາຈາກຄວາມຕາຍ ພວກທີ່ສົງສັຍກໍຢູ່ທີ່ນັ້ນໃນຕອນເຊົ້ານີ້ທໍາອິດຂອງການຄືນພຣະຊົນຂອງພຣະເຢຊູ ແຕ່ວ່າຄວາມສັດຊື່ຂອງພຣະເຈົ້າກໍປາກົດຢູ່ທີ່ນັ້ນເໝືອນກັນ.**

**ພຣະຄັມພີກ່າວວ່າຢ່າງໃດ? (ຈົ່ງເບິ່ງຕາມຂໍ້ 1, 2, 3 )**

## <u>ການສຶກສາພຣະຄັມພີ</u>

### 1. <u>ລູກາ 24:1-3</u>

*1. ແຕ່ຮຸ່ງເຊົ້າວັນຕົ້ນສັປດາ ຜູ້ຍິງເຫຼົ່ານັ້ນໄດ້ນໍາເອົາເຄື່ອງຫອມທີ່ຈັດໄວ້ນັ້ນມາເຖິງອຸບໂມງ. 2. ແລະເຂົາໄດ້ເຫັນກ້ອນຫີນນັ້ນກິ້ງອອກຈາກປາກອຸບໂມງແລ້ວ. 3. ເມື່ອເຂົ້າໄປທາງໃນແລ້ວເຂົາກໍບໍ່ເຫັນພຣະສົບ.*

ໃນຕອນເລີ້ມຕົ້ນຂອງບົດທີ 24, ຄົງບໍ່ມີຜູ້ໃດຄິດເຖິງເຣື່ອງການຄືນມາຈາກຕາຍ; ພວກເຂົາເຈົ້າຄົງບໍ່ຄາດຄິດເຖິງມັນຢ່າງແນ່ນອນ. ຈົ່ງສັງເກດເບິ່ງເຄື່ອງຫອມຕ່າງໆທີ່ພວກເຂົາເຈົ້ານໍາໄປທີ່ອຸບໂມງນັ້ນ. ເຄື່ອງຫອມເຫຼົ່ານີ້ບໍ່ແມ່ນເພື່ອຄົວອາຫານ, ແຕ່ເພື່ອຈັດຕຽມໃນການທົດສົງພຣະສົບຂັ້ນສຸດທ້າຍກ່ອນຝັງສົບເພື່ອນຂອງພວກເຂົາເຈົ້າ.

ພວກຜູ້ຍິງເຫຼົ່ານີ້ກໍຄົງບໍ່ໄດ້ຄາດຄິດວ່າກ້ອນຫີນຈະກິ້ງອອກຈາກປາກອຸບໂມງ (ເບິ່ງ ມຣກ 16:3-4); ແລະກໍຄົງບໍ່ຄາດວ່າອຸບໂມງຈະວ່າງເປົ່າເຊັ່ນກັນ. ພວກເຂົາເຈົ້າຮູ້ວ່າໄດ້ມາຖືກບ່ອນແລ້ວ. ພວກເຂົາເຈົ້າໄດ້ເຫັນພຣະສົບຂອງ

ພຣະເຢຊູໄດ້ປົງໄວ້ທີ່ນັ້ນ. (ເບິ່ງ15:47.) ແຕ່ວ່າໃນຂະນະນີ້, ໃນຕອນເຊົ້າຂອງວັນຖ້ວນສາມ, ພວກເຂົາເຈົ້າໄດ້ຍ່າງເຂົ້າໄປທາງໃນແລະກໍບໍ່ພົບພຣະສົບຂອງອົງພຣະເຢຊູຄຣິດເຈົ້າ. ພວກເຮົາບໍ່ຄວນຈະຕົກຕະລຶງຕໍ່ສິ່ງສັບສົນຂອງພວກເຂົາເຈົ້າ(ລູກາ 24:4), ຂນະທີ່ພວກເຂົາເຈົ້າບໍ່ພົບໃນສິ່ງທີ່ເຂົາເຈົ້າຫວັງຢາກພົບນັ້ນ.

ບໍ່ມີໃຜດອກທີ່ຈະຍ່າງອອກຈາກອຸບໂມງນີ້ໄປໄດ້, ມັນເປັນໄປບໍ່ໄດ້. ແຕ່ວ່າພຣະເຈົ້າກະທຳສິ່ງທີ່ເປັນໄປບໍ່ໄດ້ໃຫ້ເປັນໄປໄດ້.

ຖ້າວ່າພຣະເຈົ້າເປັນເໝືອນກັບພວກເຮົາ, ຄວາມສັດຊື່ຂອງພຣະອົງກໍຄົງມີຂອບເຂດຈຳກັດໂດຍຄວາມສາມາດຂອງພຣະອົງ. ພຣະເຈົ້າບໍ່ສາມາດສັດຊື່ໃນສິ່ງທີ່ພຣະອົງໄດ້ກ່າວວ່າພຣະອົງຈະກະທຳຖ້າວ່າຄວາມສາມາດ, ກຳລັງ, ແລະຣິດອຳນາດຂອງພຣະອົງຫາກມີກຳນົດຫຼືຂອບເຂດຈຳກັດ. ແຕ່ວ່າອຸບໂມງທີ່ວ່າງເປົ່ານັ້ນໄດ້ພິສູດວ່າພຣະເຈົ້າບໍ່ໄດ້ເປັນເໝືອນກັບພວກເຮົາ. ບໍ່ມີຫຍັງຈະທັກທ້ານພຣະເຈົ້າໃນຄວາມສາມາດແລະຣິດອຳນາດຂອງພຣະອົງຕໍ່ສິ່ງໃດກໍຕາມທີ່ພຣະອົງເລືອກຈະກະທຳ. ພຣະອົງກະທຳໃຫ້ສິ່ງທີ່ເປັນໄປບໍ່ໄດ້ໃຫ້ເປັນໄປໄດ້.

ພຣະເຈົ້າໄດ້ກ້າວເຂົ້າສູ່ກາລະເວລາແລະຊ່ອງຫວ່າງຂອງພວກເຮົາແລະໄດ້ກະທຳໃຫ້ສິ່ງທີ່ເປັນໄປບໍ່ໄດ້ໃຫ້ເປັນໄປໄດ້ໂດຍການຊົງບັນດົນໃຫ້ພຣະເຢຊູຄືນຈາກຕາຍ. ແລະອັນນັ້ນໄດ້ປ່ຽນແປງທຸກສິ່ງຢ່າງ. ຂນະທີ່ພຣະເຈົ້າໄດ້ຊົງບັນດົນໃຫ້ພຣະເຢຊູຄືນສູ່ຊີວິດ, ພຣະອົງສາມາດກະທຳສິ່ງທີ່ຄ້າຍຄືວ່າຈະເປັນໄປບໍ່ໄດ້: ຄືຍົກຍ້າຍຄວາມຜິດບາບຂອງພວກເຮົາແລະປະທານຊີວິດໃໝ່ທີ່ບໍ່ຮູ້ສິ້ນສຸດແກ່ພວກເຮົາ. ແມ່ນຫຍັງທີ່ທ່ານຍັງຈົດຈຳເມື່ອທ່ານພົບກັບເຣື່ອງການຄືນພຣະຊົນຄັ້ງທຳອິດ?

## 2. <u>ລູກາ 24:4-8</u>

*4 ເມື່ອເຂົາກຳລັງຄຶດສງົບສົນເທດ້ວຍເຫດການນັ້ນ ເບິ່ງແມ, ມີຊາຍສອງຄົນຢືນຢູ່ໃກ້ເຂົາ ນຸ່ງເຄື່ອງອັນງົດງາມຈົບເຫຼື້ອມຕາ. 5 ຝ່າຍແມ່ຍິງເຫຼົ່ານັ້ນກໍຢ້ານແລະກົ້ມໜ້າລົງເຖິງດິນ ສອງຄົນນັ້ນໄດ້ຖາມເຂົາວ່າ, "ພວກນາງຊອກຄົນເປັນໃນໝູ່ຄົນຕາຍເຮັດຫຍັງ. 6. (ພຣະອົງບໍ່ປະທັບຢູ່ທີ່ນີ້ ແຕ່ຖືກຊົງບັນດານໃຫ້ເປັນຄືນມາແລ້ວ) ຈົ່ງລະນຶກເຖິງຄຳທີ່ພຣະອົງຊົງກ່າວກັບທ່ານທັງຫຼາຍ ເມື່ອພຣະອົງຍັງຢູ່ໃນແຂວງຄາລີເລນັ້ນ. 7 ວ່າບຸດມະນຸດຈະຕ້ອງຖືກມອບໄວ້ໃນມືຄົນບາບ ຈະຖືກຄຶງໄວ້ທີ່ໄມ້ກາງແຂນ ແລະໃນວັນຖ້ວນສາມກໍຈະຄືນມາອີກ". 8. ແມ່ຍິງເຫຼົ່ານັ້ນໄດ້ລະນຶກເຖິງຖ້ອຍຄຳຂອງພຣະອົງ.*

ພວກຜູ້ຍິງບໍ່ໄດ້ຖືກປ່ອຍໃຫ້ຕົກຢູ່ໃນພາວະສັບສົນນັ້ນ. ມີຊາຍສອງຄົນ-ເທວະດາ (ເບິ່ງ ມັດທາຍ 28:5) ໄດ້ປາກົດຕົວແລະໄດ້ຖາມຄຳຖາມດຽວວ່າ: "ພວກນາງຊອກຄົນເປັນໃນໝູ່ຄົນຕາຍເຮັດຫຍັງ?." ພວກຜູ້ຊາຍທີ່ປາກົດວ່າເກືອບບໍ່ໜ້າເຊື່ອກ່ຽວກັບບ່ອນທີ່ພວກຜູ້ຍິງຢູ່ນັ້ນ. ພວກເຈົ້າຊອກຫາພຣະເຢຊູ, ແຕ່ວ່າພວກເຈົ້າຊອກຜິດບ່ອນໃນຕອນເຊົ້າວັນອາທິດນີ້. ເປັນຫຍັງບາງຄັ້ງພວກເຮົາຈຶ່ງສົງສັຍຫຼືລືມສິ່ງທີ່ພຣະເຈົ້າໄດ້ຊົງສັນຍາໄວ້?

ພວກຜູ້ຊາຍໄດ້ໃຫ້ທາງເລືອກອັນດຽວເທົ່ານັ້ນສຳລັບການຫາຍສາບສູນຂອງພຣະເຢຊູໃນບ່ອນຄົນຕາຍນີ້. ບໍ່ມີຜູ້ໃດມາລັກເອົາສົບຂອງພຣະອົງ; ຫຼືພຣະອົງບໍ່ໄດ້ຟື້ນຈາກການຄືນສະຕິມາອີກເພາະອາກາດເຢັນຂອງອຸບໂມງ. "ພຣະອົງບໍ່ປະທັບຢູ່ທີ່ນີ້ ແຕ່ຖືກຊົງບັນດານໃຫ້ເປັນຄືນມາແລ້ວ!"

ອັນນີ້ບໍ່ຄວນຈະເປັນການຕົກຕະລຶງສຳລັບພວກຜູ້ຍິງ. ຜູ້ບັນທຶກຂ່າວປະເສີດໄດ້ໃຫ້ເຄື່ອງໝາຍບອກຫຼາຍປະການເມື່ອພຣະເຢຊູໄດ້ບອກພວກທີ່ຕິດຕາມພຣະອົງວ່າສິ່ງເຫຼົ່ານີ້ຈະເກີດຂຶ້ນ.

- "ເບິ່ງແມ, ພວກເຮົາກຳລັງຂຶ້ນເມືອກຸງເຢຣູຊາເລັມ ແລະເຂົາຈະມອບບຸດມະນຸດໄວ້ກັບພວກປະໂຣຫິດຕົນໃຫຍ່ແລະພວກນັກທັມ ພວກເຫຼົ່ານີ້ຈະລົງໂທດປະຫານຊີວິດທ່ານ" (ມທ 20:18).
- "ແລ້ວພຣະອົງຊົງຕັ້ງຕົ້ນກ່າວສອນພວກສາວົກວ່າ, "ບຸດມະນຸດຈະຕ້ອງທົນທຸກທໍຣະມານຫຼາຍປະການ ພວກເຖົ້າແກ່ ພວກປະໂຣຫິດຕົນໃຫຍ່ ແລະພວກນັກທັມຈະບໍ່ຍອມຮັບ ເຂົາຈະໄດ້ຂ້າທ່ານເສັຽ ແລະໃນວັນຖ້ວນສາມທ່ານຈະຖືກຊົງບັນດານໃຫ້ເປັນຄືນມາ." ຄຳເຫຼົ່ານີ້ພຣະອົງຊົງກ່າວໂດຍເປີດເຜີຍ" (ມຣກ 8:31-32)

ພວກເຮົາຮູ້ວ່າພວກສາວົກກຳລັງຟັງຢູ່ເພາະວ່າມີຕອນນຶ່ງທ່ານເປໂຕໄດ້ໂຕ້ຕອບແລະທູນຫ້າມພຣະອົງຢ່າງແຂງແຮງວ່າ, "ນາຍເອີຍ, ຂໍທ່ານຈົ່ງໄດ້ຮັບຄວາມເມດຕາ ການນີ້ຈະບໍ່ເກີດມີແກ່ທ່ານຈັກເທື່ອ!"(ມທ 16:22). ມີຕອນນຶ່ງອີກຄືເມື່ອພຣະເຢຊູໄດ້ບອກພວກສາວົກວ່າຈະມີຫຍັງເກີດຂຶ້ນກັບພຣະອົງ, "ພວກສາວົກກໍມີຄວາມທຸກໜັກໃຈ" (ມທ 17:23). ແຕ່ວ່າພຣະເຈົ້າຍັງຊົງສັດຊື່. ພວກສາວົກບໍ່ສາມາດນັບຄວາມສັດຊື່ຂອງພຣະເຈົ້າໄດ້ຊຶ່ງກັບກາຍເປັນຈິງດັ່ງທີ່ພຣະອົງໄດ້ຊົງສັນຍາໄວ້ຄື: ການຄືນພຣະຊົນ.

ພຣະຄັມພີໄດ້ບັນທຶກເກືອບເຖິງເກົ້າພັນຄຳສັນຍາຈາກພຣະເຈົ້າ. ພວກເຮົາສາມາດວາງໃຈເຊື່ອພຣະອົງຜູ້ຊົງປະທານຄຳສັນຍາເຫຼົ່ານັ້ນໃຫ້ແກ່ພວກເຮົາເພາະວ່າອຸບໂມງວ່າງເປົ່າມີຄວາມໝາຍວ່າພຣະຄຳແລະຄຳສັນຍາຕ່າງໆຂອງພຣະເຈົ້າບໍ່ແມ່ນເປົ່າດາຍ. ພຣະອົງຈະກະທຳໃນສິ່ງທີ່ພຣະອົງໄດ້ກ່າວໄວ້. ຄວາມສັດຊື່ອັນດຽວກັນນັ້ນ, ພຣະເຈົ້າອົງຊົງຣິດທານຸພາບຜູ້ຊົງໂຜນັບນດານໃຫ້ພຣະເຢຊູຄືນຂຶ້ນມາກໍສາມາດຄຸ້ມຄອງເບິ່ງແຍງທ່ານໄດ້ດ້ວຍ.

ຖ້ອຍຄຳທີ່ພວກຜູ້ຊາຍ(ເທວະດາ)ເຫຼົ່ານີ້ໄດ້ກ່າວກໍເຮັດໃຫ້ພວກຜູ້ຍິງເຫຼົ່ານັ້ນຈຳໄດ້. ແລະພວກເຂົາເຈົ້າໄດ້ຈື່ຈຳຄ້ອຍຄຳຂອງພຣະອົງ." ໃນຕອນເຊົ້າວັນອາທິດຂນະນັ້ນກ່ອນສິ່ງທີ່ປາກົດການອັນໜ້າຢ້ານກົວ, ການສັບສົນຫວຸ້ນວາຍ, ແລະການສິ້ນຫວັງ, ພວກຜູ້ຍິງເຫຼົ່ານີ້ກໍໄດ້ຮູ້ຕົວວ່າມັນເຖິງຈຸດຈົບແລ້ວ, ຄຳສັນຍາທີ່ເປັນໄປບໍ່ໄດ້ຈາກພຣະຜູ້ເປັນເຈົ້າຂອງພວກເຂົາເຈົ້າກໍໄດ້ກາຍເປັນຈິງ. ພຣະເຢຊູໄດ້ຄືນມາຈາກຕາຍ!

## 3. <u>ລູກາ 24:9-12</u>

*9 ແລະເມື່ອໄດ້ກັບໄປຈາກອຸບໂມງແລ້ວ ເຂົາໄດ້ບອກເຫດການທັງປວງນັ້ນແກ່ພວກສິບເອັດຄົນນັ້ນ ແລະຄົນອື່ນໆເໝືອນກັນ. 10. ຜູ້ທີ່ໄດ້ບອກເຫດການນັ້ນແກ່ພວກອັຄສາວົກ ຄືມາຣີອາມັກດາລາ ໂຢຮັນນາ ມາຣີອາແມ່ຂອງຢາໂກໂບ ພ້ອມດ້ວຍຜູ້ອື່ນໆທີ່ຢູ່ກັບເຂົາ. 11. ຝ່າຍພວກອັຄສາວົກບໍ່ເຊື່ອຄຳເວົ້າຂອງພວກຜູ້ຍິງ ເພາະຖືວ່າເປັນຄຳເວົ້າເປົ່າໆ .12. (ແຕ່ເປໂຕໄດ້ລຸກຂຶ້ນແລ່ນມາຍັງອຸບໂມງ ເມື່ອກົ້ມລົງກໍເຫັນແຕ່ຜ້າຫໍ່ເທົ່ານັ້ນ ຈຶ່ງກັບໄປດ້ວຍຄຶດປລາດໃຈເຖິງເຫດການຊຶ່ງໄດ້ເກີດຂຶ້ນນັ້ນ).*

ແມ່ນຫຍັງຄືຄວາມຮູ້ສຶກທີ່ປາກົດອອກໃຫ້ເຫັນເມື່ອໄດ້ອ່ານພຣະຄຳວັກນີ້?

ການຮີບຮ້ອນໃຫ້ກັບໄປຫາຄົນອື່ນໆ, "ພວກເຂົາເຈົ້າໄດ້ບອກເຫດການທັງປວງນັ້ນ" ຕໍ່ພວກທີ່ຕິດຕາມພຣະເຢຊູຄົນອື່ນໆ. ແຕ່ກໍໜ້າເສັຽໃຈ, ຄຳລາຍງານຂອງພວກຜູ້ຍິງບໍ່ມີນ້ຳໜັກພໍຕໍ່ພວກສິບເອັດຄົນນັ້ນຫຼືພວກຄົນອື່ນໆທີ່ຢູ່ຮ່ວມກັບພວກເຂົາເຈົ້ານັ້ນ. "ເພາະຖືວ່າເປັນຄຳເວົ້າເປົ່າໆຕໍ່ພວກເຂົາເຈົ້າ." ພວກເຂົາເຈົ້າຈຶ່ງບໍ່ຟັງຊຶ່ງຖືວ່າມັນໄຮ້ສາຣະ, ເປັນຕາຫົວ, ແລະຍາກທີ່ຈະເຊື່ອໄດ້.

ກົງກັນຂ້າມ, "ພວກເຂົາເຈົ້າບໍ່ເຊື່ອ." "ພວກເຂົາເຈົ້າ" ຊຶ່ງລວມທັງສິບເອັດຄົນທີ່ຍັງມີຕຳແໜ່ງອັຄສາວົກ, ຜູ້ທີ່ໄດ້ເດີນຕິດຕາມພຣະເຢຊູຢ່າງໃກ້ຊິດ. ພວກເຫຼົ່ານີ້ເປັນເພື່ອນໃກ້ຊິດທີ່ສຸດຂອງພຣະເຢຊູ, ພວກເຫຼົ່ານັ້ນທີ່ໄດ້ໃຊ້ເວລາສ່ວນຫຼາຍຮ່ວມກັບພຣະອົງ. ພວກເຂົາເຈົ້າໄດ້ຍິນທຸກສິ່ງທຸກຢ່າງທີ່ພຣະອົງຕັດກ່າວ. ຊຶ່ງລວມທັງຂໍ້ຄວາມກ່ຽວກັບການຄືນພຣະຊົນຂອງພຣະອົງ, ເຖິງປານນັ້ນໃນຂນະນັ້ນພວກເຂົາເຈົ້າກໍຍັງສົງສັຍຢູ່.

ອຸບໂມງທີ່ວ່າງເປົ່າແມ່ນການພິສູດທາງບວກ ເປັນຫຼັກຖານອັນແໜ້ນແກ່ນທີ່ພຣະເຈົ້າບໍ່ໄດ້ເຂົ້າສ່ວນໂດຍຄວາມບໍ່ເຊື່ອຂອງພວກເຮົາ. ພຣະເຈົ້າໄດ້ຊົງກະທຳໃນສິ່ງທີ່ພຣະອົງຕ້ອງກະທຳ ເພາະວ່າພຣະອົງສັດຊື່ທ່ຽງທັມຕໍ່ພຣະອົງເອງ. ພຣະອົງບໍ່ມີຂອບເຂດຈຳກັດຝ່າຍໂລກນີ້ ຫຼືບໍ່ຈຳເປັນຕ້ອງຈຳກັດເພາະການຂາດຄວາມເຊື່ອຂອງພວກເຮົາ. ຄວາມເຊື່ອເປັນສິ່ງສຳຄັນ, ເພື່ອຄວາມແນ່ນອນ ແຕ່ວ່າພຣະເຈົ້າສາມາດແລະບາງຄັ້ງກໍບັນລຸແຜນການແລະເປົ້າໝາຍຂອງພຣະອົງເຖິງແມ່ນວ່າພວກເຮົາບໍ່ເຊື່ອຫຼືຂາດຄວາມເຊື່ອກໍຕາມ. ພຣະເຈົ້າຊົງສັດຊື່ຕໍ່ພຣະອົງເອງ ຕໍ່ຄຳສັນຍາຂອງພຣະອົງ, ແລະຕໍ່ເປົ້າໝາຍຂອງພຣະອົງຢູ່ສເມີ ແລະທ່ານສາມາດເຊື່ອໄດ້ວ່າພຣະອົງຈະສັດຊື່ຕໍ່ທ່ານຢູ່ສເມີ.

ທ່ານເປໂຕທີ່ເປັນສາວົກທີ່ພວກເຮົາເຫັນວ່າສ່ວນຫຼາຍການເວົ້າແລະການກະທຳຜິດພາດຢູ່ຕລອດ. ແຕ່ວ່າບໍ່ແມ່ນຕອນນີ້. "ແຕ່ວ່າ, ທ່ານເປໂຕ, ໄດ້ລຸກຂຶ້ນແລະໄດ້ແລ່ນໄປທີ່ອຸບໂມງ." ແທນທີ່ຈະຢູ່ໃນຄວາມສົງສັຍແລະບໍ່ເຊື່ອ, ທ່ານ

ໄດ້ລຸກຂຶ້ນແລະໄດ້ໄປກວດກາເບິ່ງດ້ວຍຕົວເອງ. ທ່ານໄດ້ສືບສວນໄຕ່ຕອງ. ທ່ານເປໂຕຕັດສິນໃຈໃຊ້ຄວາມເຊື່ອໜ້ອຍດຽວທີ່ລາວມີເຫຼືອຢູ່ນັ້ນ, ແລະລາວໄດ້ພົບພຣະເຈົ້າທີ່ຊົງສັດຊື່.

ໃຫ້ພວກເຮົາ "ຝຶກຝົນ" ສມອງຂອງພວກເຮົາຂຶ້ນໃໝ່ໃຫ້ຄິດເຖິງຄວາມເຊື່ອນັ້ນກ່ອນ. ມີຄວາມໝາຍວ່າ, ຈະມີຫຍັງເກີດຂຶ້ນກໍຕາມ, ໃຫ້ພວກເຮົາສືບຕໍ່ວາງໃຈເຊື່ອໃນພຣະເຈົ້າອົງຊົງສັດຊື່ຂອງພວກເຮົາ. ແທນທີ່ຈະມີການສົງໄສພຣະອົງ, ພວກເຮົາຄວນຈະວາງໃຈເຊື່ອຢ່າງຮີບດ່ວນແລະຢ່າງອັດຕະໂນມັດວ່າພຣະເຈົ້າຍັງຄວບຄຸມທຸກສິ່ງຢ່າງ ເພາະພຣະອົງຊົງເປັນຢ່າງນັ້ນແທ້.

ຖ້າຫາກວ່າການຄືນພຣະຊົນບໍ່ໄດ້ເກີດຂຶ້ນ ຖ້າວ່າພຣະເຢຊູບໍ່ໄດ້ຖືກຊົງດົນບັນດານໃຫ້ຄືນມາຈາກຕາຍ ຈາກນັ້ນຊີວິດຄຣິສຕຽນກໍບໍ່ມີຫຍັງໝົດ. (ເບິ່ງ 1 ກຣທ 15:13-14. ) ແຕ່ວ່າຖ້າການຟື້ນຄືນພຣະຊົນຫາກເປັນຈິງ ຖ້າວ່າອຸບໂມງນັ້ນຫວ່າງເປົ່າແທ້ ແລະພຣະເຢຊູຍັງຊົງພຣະຊົນຢູ່ ອັນນັ້ນປ່ຽນແປງທຸກສິ່ງທຸກຢ່າງ. ເມື່ອພວກເຮົາເຫັນຄວາມຈິງຂອງການຄືນພຣະຊົນ, ຄວາມສົງໄສຂອງພວກເຮົາກໍຈືດຈາງຫາຍໄປ ຂນະນັ້ນຄວາມເຊື່ອກໍປາກົດອອກມາແທນທີ່. ຄວາມຢ້ານກົວຈະຖືກທົດແທນດ້ວຍຄວາມຫວັງໃຈ. ພວກເຮົາສາມາດວາງໃຈເຊື່ອໃນພຣະເຢຊູເພາະວ່າພຣະອົງຊົງພຣະຊົນຢູ່. ພວກເຮົາມີພຣະບິດາແຫ່ງສວັນອົງຊົງເຮັດໃຫ້ສິ່ງທີ່ເປັນໄປບໍ່ໄດ້ກັບກາຍເປັນໄປໄດ້!

ແມ່ນຫຍັງຄືສິ່ງທີ່ເປັນໄປໄດ້ໃນການຕອບສນອງຕໍ່ການຄືນພຣະຊົນຂອງພຣະເຢຊູ?

## ນຳໃຊ້ໃນຊີວິດ

ທ່ານຈະຕອບສນອງຢ່າງໃດຕໍ່ຄວາມສັດຊື່ຂອງພຣະເຈົ້າໃນອາທິດນີ້? ໃຫ້ເລືອກເອົາການປະກອບໃຊ້ອັນນຶ່ງໃນຂ້າງລຸ່ມຕໍ່ໄປນີ້:

- **ເຊື່ອ.** ພຣະເຢຊູເຊື້ອເຊີນທ່ານໃຫ້ຕິດຕາມພຣະອົງ. ຖ້າວ່າທ່ານຫາກບໍ່ເຄີຍວາງໃຈເຊື່ອໃນພຣະຄຣິດ, ຈົ່ງມອບຄວາມເຊື່ອຂອງທ່ານໃນພຣະອົງ. ບອກຜູ້ໃດຜູ້ນຶ່ງໃນກຸ່ມຂອງທ່ານວ່າທ່ານປາຖນາຢາກເຊື່ອແລະວາງໃຈໃນພຣະຄຣິດ.

- **ສືບສວນ.** ຖ້າວ່າທ່ານຍັງສງົບສົນເທວ່າການຄືນພຣະຊົນຂອງພຣະເຢຊູແມ່ນບາງຢ່າງທີ່ພວກເຮົາສາມາດເພິ່ງອີງໄດ້, ຊອກຫາຄົ້ນຄ້ວາດ້ວຍຕົວທ່ານເອງ. ຊອກຫາປຶ້ມທີ່ກ່ຽວເຣື່ອງຂອງພຣະຄຣິດຕາມຫໍສມຸດຕ່າງໆເພື່ອອ່ານເພີ້ມເຕີມ.

- **ວາງໃຈເຊື່ອ.** ພຣະເຈົ້າຊົງສັດຊື່ຕໍ່ສິ່ງທີ່ພຣະອົງໄດ້ຊົງສັນຍາໄວ້, ແລະກໍເພາະດ້ວຍເຫດນີ້, ອຸບໂມງຂອງພຣະເຢຊູຈຶ່ງວ່າງເປົ່າ. ຂນະທີ່ພຣະເຈົ້າສາມາດກະທຳບາງຢ່າງທີ່ໜ້າອັສຈັນແລະຣິດທານຸພາບຄືການຟື້ນບາງຄົນໃຫ້ຄືນຈາກຄວາມຕາຍ, ຈົ່ງວາງໃຈເຊື່ອໃນພຣະອົງກັບບັນຫາຕ່າງໆທີ່ທ່ານກຳລັງປະເຊີນໜ້າຢູ່, ມອບຄວາມກະວົນກະວາຍຂອງທ່ານໃຫ້ພຣະອົງ. ຈົ່ງວາງໃຈໃນພຣະອົງຜູ້ຊົງສັດຊື່ຢ່າງຕລອດໄປເປັນນິດ.

ມັນເປັນຂອງທັມມະດາທີ່ຈະເລີ້ມຕົ້ນດ້ວຍຄວາມສົງໄສ, ແຕ່ວ່າພວກເຮົາຄວນຈະເປັນຜູ້ສັດຊື່. ແລະຖ້າວ່າພວກເຮົາເປັນ, ພວກເຮົາຈະພົບວ່າພຣະເຈົ້າຜູ້ຊົງສັດຊື່ກໍຈະຢູ່ທີ່ນັ້ນລໍພົບກັບພວກເຮົາສເມີ, ໃນອະນາຄົດ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA**